**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ອັດຕະປື

ກອງເລຂາປ້ອງກັນ ແລະ ຄວບຄຸມໄພພິບັດ ເລກທີ 49 /ສທຂ. ກປຄ

ອັດຕະປື, ວັນທີ 11 ກັນຍາ 2018

# ບົດລາຍງານປະຈຳວັນ
# ກ່ຽວກັບຜົນກະທົບດ້ານສາທາລະນະສຸກຈາກໄພພິບັດ
# ເມືອງສະໜາມໄຊ, ແຂວງອັດຕະປື, ວັນທີ 11 ກັນຍາ 2018 ເວລາ 16:30 (ສະບັບທີ 49)

## I. ສະພາບການລວມ

ສະພາບທີ່ເກີດຂຶ້ນເລີ່ມກາງຄືນ ຂອງ ວັນທີ 23 ກໍລະກົດ 2018 ຢູ່ເມືອງສະໜາມໄຊ ແຂວງ ອັດຕະປື ຜົນກະທົບຈາກໄພນໍ້າຖ້ວມຄັ້ງນີ້ ແມ່ນຮ້າຍແຮງ ແລະ ໃຫຍ່ຫຼວງ, ອາດຈະເວົ້າໄດ້ວ່າເປັນຄັ້ງທຳອິດໃນປະເທດເຮົາ. ສາເຫດດັ່ງກ່າວແມ່ນເນື່ອງຈາກຝົນຕົກໜັກຕິດຕໍ່ກັນຫຼາຍວັນ, ປະລິມານນໍ້າຂຶ້ນສູງຫຼາຍ, ເຮັດໃຫ້ອ່າງເກັບນໍ້າສຳຮອງຂອງເຂື່ອນໄຟຟ້າເຊປ່ຽນ-ເຊນໍ້ານ້ອຍ ບໍ່ສາມາດຮັບປະລິມານນໍ້າໄດ້ ເລີຍເຮັດໃຫ້ສັນກັນນໍ້າເຂື່ອນແຕກ ປະລິມານນໍ້າໃນອ່າງໄດ້ໄຫຼລົງມາສູ່ແມ່ນໍ້າເຊປຽນ ພັດເອົາຊັບສິນ, ບ້ານເຮືອນ, ປະຊາຊົນຢ່າງກະທັນຫັນ.

## II. ສະພາບການປະຈຳວັນ

ຫ້ອງປະຕິບັດງານສຸກເສີນດ້ານສາທາລະນະສຸກແຂວງອັດຕະປື ຂໍລາຍງານຄວາມຄືບໜ້າຂອງການຕອບໂຕ້ໄພພິບັດໃນມື້ທີ 49 ກ່ຽວກັບຜົນກະທົບດ້ານສາທາລະນະສຸກມາຍັງທ່ານລັດຖະມົນຕີກະຊວງສາທາ ລະນະສຸກ ແລະ ທ່ານເຈົ້າແຂວງ ອັດຕະປື ຊາບວ່າ:

ປະຊາຊົນທີ່ຖືກຜົນກະທົບ ໃນ 13 ບ້ານ ທີ່ຄະນະກຳມະການ ຕ້ານໄພພິບັດ ຂັ້ນເມືອງ ປະກາດເປັນທາງການ ໃນນັ້ນມີ 6 ບ້ານທີ່ຖືກຜົນກະທົບຮ້າຍແຮງ ຄື: ບ້ານ ຫີນລາດ, ບ້ານ ທ່າຫີນໃຕ້, ບ້ານ ສະໜອງໃຕ້, ບ້ານ ທ່າແສງຈັນ, ບ້ານໃໝ່, ບ້ານ ແທໃຫຍ່ ລວມມີປະຊາກອນທັງໝົດ **7,431** ຄົນ, ຍິງ **3,684** ຄົນ.

ປະຈຸບັນການໃຫ້ບໍລິການຂອງວຽກງານສາທາລະນະສຸກ ແມ່ນໄດ້ໃຫ້ການບໍລິການປິ່ນປົວຢູ່ຈຸດບໍລິການຄືເກົ່າ ເຊິ່ງມີທັງໝົດ 5 ຈຸດ ມີຄື: ຈຸດໂຮງໝໍເມືອງ, ຈຸດບ້ານປີນດົງ, ຈຸດຕະມໍຢອດ, ຈຸດບ້ານບົກ ແລະ ຈຸດ ມສ ຈັນທາ.

ການເກັບກຳຂໍ້ມູນຈຳນວນປະຊາກອນທີ່ອາໄສຢູ່ຈຸດພັກຊົ່ວຄາວ ໄດ້ມີການປ່ຽນແປງ ອີງຕາມອັດເດດຂໍ້ມູນຈາກ ພາກສະໜາມ ຄັ້ງວັນທີ 8 ກັນຍາ 2018 ( ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ) ດັ່ງນີ້:

| ລຳດັບ | ຈຸດພັກຊົ່ວຄາວ | ຈຳນວນຄອບຄົວ | ຈຳນວນ ປະຊາກອນ (ຄົນ) | ຍິງ (ຄົນ) |
|---|---|---|---|---|
| **ຈຸດພັກຂັ້ນເມືອງ** | | | | |
| 1 | ໂຮງຮຽນ ມສ ສະໜາມໄຊ | 234 | 992 | 503 |
| 2 | ໂຮງຮຽນປະຖົມມິດສຳພັນ | 383 | 1530 | 725 |

| | | | | |
|---|---|---|---|---|
| 3 | ບ້ານ ອຸດົມໄຊ | 12 | 50 | 23 |
| 4 | ຈຸດຄຸ້ມດອນບີກ | 103 | 425 | 205 |
| 5 | ຈຸດບ້ານປີ່ນດົງ | 81 | 288 | 142 |
| 6 | ຈຸດບ້ານຕໍ່ນໍ້ຍອດ | 92 | 355 | 242 |
| 7 | ສູນພັກຊື່ວຄາວຫາດຍາວ | 140 | 564 | 282 |
| **ຈຸດພັກຢູ່ຂັ້ນແຂວງ** | | | | |
| 8 | ຈຸດໂຮງຮຽນປະຖົມເຊກອງ | 31 | 110 | 49 |
| **ຈຸດພັກຂອງຜູ້ປະສົບໄພທີ່ອາໃສຢູ່ເຮືອນ** | | | | |
| 9 | ຄຸ້ມທ່າອວນ | 198 | 798 | 380 |
| 10 | ຄຸ້ມດອນມ່ວງ | 337 | 1501 | 740 |
| 11 | ຄຸ້ມດອນບີກ | 179 | 818 | 393 |
| | **ລວມ** | **1,790** | **7,431** | **3,684** |

❖ **ຈຳນວນແພດປະຈຳຢູ່ແຕ່ລະຈຸດບໍລິການ**

| ລຳ ດັບ | ຈຸດບໍລິການ | ແພດປະຈຳ | | | | ໝາຍເຫດ |
|---|---|---|---|---|---|---|
| | | ແຂວງ, ເມືອງ | ກະຊວງ/ ຕ່າງແຂວງ | ຕ່າງ ປະເທດ | ລວມ | |
| 1 | ຈຸດປະສານງານສາທາລະນະສຸກຫ້ອງການສາທາເມືອງ | 7 | 0 | 0 | 7 | ທີມງານປະສານງານຂັ້ນແຂວງ 3 ທ່ານ, ເມືອງ 4ທ່ານ |
| **ຈຸບໍລິການສຸຂະພາບ ທີ່ສາມາດເຂົ້າເຖິງທາງລົດ** | | | | | | |
| 1 | ໂຮງໝໍເມືອງສະໜາມໄຊ | 28 | 0 | 1 | 29 | ແພດ 10 , ພະຍາບານ 10 ອື່ນໆ 9 ທ່ານ. |
| 2 | ໂຮງຮຽນ ມສ ສະໜາມໄຊ | 0 | 0 | 0 | 0 | ໄດ້ຖອນການບໍລິການການແພດ |
| 3 | ຄຸ້ມດອນບີກ | 4 | 0 | 0 | 4 | ແພດ 2 ທ່ານ, ພະຍາບານ 2 ທ່ານ |
| 4 | ຈຸດ ມສ ຈັນທາ | 2 | 0 | 0 | 2 | ແພດ 1 ທ່ານ, ພະຍາບານ 1 ທ່ານ (ເມືອງສາມັກຄີໄຊ) |
| **ເຂດທີ່ສາມາດເຂົ້າເຖິງ ທາງນໍ້າ ແລະ ທາງບິນ, ແຕ່ໄດ້ ນຳສົ່ງແພດໄປປະຈຳການແລ້ວ** | | | | | | |
| 5 | ປີ່ນດົງ | 3 | 0 | 0 | 3 | ແພດ 2 ທ່ານ, ພະຍາບານ 1 ຄົນ |
| 6 | ຈຸດບ້ານ ຕໍ່ນໍ້ຍອດ | 1 | 0 | 0 | 1 | ແພດ 1 ທ່ານ,ພະຍາບານ 0 ທ່ານ |
| **ລວມທັງໝົດ** | | **45** | **0** | **1** | **46** | |

**ໝາຍເຫດ:** - ແພດກະຊວງ : ແພດກະຊວງມີ 8 ທ່ານ (ປະຈໍາຢູ່ຈຸດໂຮງໝໍເມືອງ 04 ທ່ານ , 4 ທ່ານແມ່ນເຮັດວຽກສຸຂະພາບຈິດຕາມ ຈຸດຕ່າງໆ)

- ແພດໂຮງໝໍແຂວງ : ຈໍານວນ 4 ທ່ານ, ພະຍາບານ 2 (ປະຈໍາຢູ່ໂຮງໝໍເມືອງ 04 ທ່ານ

# III. ມາດຕະການທີ່ໄດ້ຈັດຕັ້ງປະຕິບັດ

## 1. ຫ້ອງປະຕິບັດງານສຸກເສີນດ້ານສາທະນາລະນະສຸກ (EOC) ຂັ້ນແຂວງ

- ຈັດສົ່ງທີມງານກອງເລຂາປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນແຂວງລົງສັບປ່ຽນທີມງານຢູ່ພາກສະໜາມ.

## 2. ຈຸດປະສານງານສຸກເສີນດ້ານສາທາລະນະສຸກພາກສະໜາມ

- ໄດ້ຮັບທີມງານກອງເລຂາປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນແຂວງລົງສັບປ່ຽນທີມງານຢູ່ພາກສະໜາມ ຈໍານວນ 1 ທ່ານ.
- ໄດ້ເຮັດຂໍ້ຕົກລົງແຕ່ງຕັ້ງພະນັກງານແພດທີ່ມາຈາກໂຮງໝໍເມືອງຊານໄຊໃຫ້ໄປປະຈໍາຢູ່ໂຮງໝໍເມືອງສະໜາມໄຊ ຈໍານວນ 4 ທ່ານ ໃນຄັ້ງວັນທີ 10-16 ກັນຍາ 2018
- ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບໜ້າວຽກທີ່ຕົນໄດ້ຮັບຜິດຊອບຂອງຈຸດບໍລິການພາກສະໜາມທີ່ຫ້ອງປະຊຸມຫ້ອງການສາທາລະນະສຸກເມືອງ.

❖ **ວຽກງານນໍ້າ , ສຸຂະພິບານ ແລະ ອະນາໄມສິ່ງແວດລ້ອມ**

| ລ/ດ | ສະຖານທີ່ | ສະບົບນໍ້າ | | | | ວິດຖ່າຍ | | | ຫ້ອງນໍ້າເຄື່ອນທີ່ | ຂຸມເກັບນໍ້າເປື້ອນ |
|---|---|---|---|---|---|---|---|---|---|---|
| | | ນໍ້າບາດານ | | ນໍ້າສ້າງ | ສ້າງໃໝ່ | ຄົງທີ່ | | ສ້າງໃໝ່ | | |
| | | ໃຊ້ໄດ້ | ໃຊ້ບໍ່ໄດ້ | | | ໃຊ້ໄດ້ | ໃຊ້ບໍ່ໄດ້ | | | |
| 1 | ມັດທະຍົມສະໜາມໄຊ | 4 | 0 | 2 | 2 | 45 | 2 | 29 | 0 | 0 |
| 2 | ໂຮງຮຽນປະຖົມ ມິດສໍາພັນ | 2 | 0 | 1 | 1 | 23 | 1 | 14 | 0 | 2 |
| 3 | ໂຮງຮຽນອະນຸບານກາເດັ້ນ | 2 | 1 | 0 | 1 | 6 | 5 | 4 | 0 | 1 |
| 4 | ຫ້ອງວ່າການປົກຄອງ | 1 | 0 | 1 | 1 | 9 | 0 | 2 | 0 | 0 |
| 5 | ໂຮງຮຽນອຸດົມໄຊ | 2 | 0 | 0 | 1 | 20 | 3 | 14 | 0 | 0 |
| 6 | ບ້ານບົກ | 4 | 0 | 0 | 6 | 9 | 0 | 11 | 0 | 0 |
| 7 | ໂຮງໝໍ-ຫ້ອງການສາທາ | 3 | 0 | 0 | 1 | 15 | 0 | 4 | 0 | 1 |
| 8 | ຫ້ອງການບ້ານມິດສໍາພັນ | 0 | 1 | 1 | 1 | 6 | 0 | 5 | 0 | 1 |
| 9 | ບ້ານ ປິນດົງ | 4 | 2 | 0 | 0 | 6 | 1 | 0 | 0 | 0 |
| 10 | ບ້ານ ຕະມິຢອດ | 1 | 0 | 0 | 5 | 2 | 0 | 15 | 0 | 0 |
| 11 | ບ້ານໃໝ່ (ແຄ້ມທະຫານ) | 0 | 2 | 0 | 0 | 0 | 8 | 0 | 0 | 0 |
| 12 | ສະໜາມແດງ | 0 | 0 | 0 | 0 | 1 | 0 | 0 | 0 | 0 |
| 13 | ໂຮງຮຽນ ມສ ຈັນທາ | 1 | 1 | 0 | 0 | 9 | 0 | 0 | 0 | 0 |
| 14 | ຫ້ອງການບ້ານທ່າເດື່ອ | 0 | 0 | 0 | 0 | 1 | 0 | 0 | 0 | 0 |
| | ລວມທັງໝົດ | 24 | 7 | 5 | 19 | 152 | 20 | 98 | 0 | 5 |

❖ **ວຽກງານສຸຂະສຶກສາ**

- ລົງໂຄສະນາສຸຂະສຶກສາຄວບຄຸມພະຍາດໄຂ້ຍູງລາຍຢູ່ເຫດສະບານ ແລະ ສູນອ້ອມຂ້າງໂຮງຮຽນອານຸບານ ແລະ ປະຖົມ.
- ລົງສຳຫຼວດໜອນນ້ຳຢູ່ບ້ານມິດສຳພັນຮ່ວມກັບຂະແໜງຄອບຄຸມພະຍາດຕິດຕໍ່.
- ລົງຕິດຕາມວຽກງານການກຳຈັດຂີ້ເຫຍື້ອ ແລະ ຮ່ອງນ້ຳເປື້ອນຢູ່ ແຕ່ລະສູນໃນເຫດສະບານເມືອງ.
- ລົງສີດນ້ຳຢາ EM ໃສ່ຫ້ອງນ້ຳຢູ່ໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ.

❖ **ວຽກງານ ແມ່ ແລະ ເດັກ ແລະ ໂພສະນາການ**

- ລົງກວດກັ່ນຕອງຢູ່ຈຸດບ້ານ ອຸດົມໄຊ ແລະ ຈຸດໂຮງຮຽນ ມສ ສະໜາມໄຊ.

➢ **ວຽກງານແມ່ ແລະ ເດັກ**

| ລຳດັບ | ລາຍການ | ຈຳນວນບໍລິການສະສົມຜ່ານມາ | ຈຳນວນບໍລິການ ໃໝ່ | ຈຳນວນ ບໍລິການ ສະສົມທັງໝົດ |
|---|---|---|---|---|
| 1 | ກວດທ້ອງແມ່ມານ | 436 | 9 | 445 |
| 2 | ກວດຫຼັງເກີດ | 35 | 1 | 36 |
| 3 | ເກີດລູກ | 12 | 0 | 12 |
| 4 | ບໍລິການວາງແຜນຄອບຄົວ | 673 | 19 | 692 |
| 5 | ທາດເຫຼັກແມ່ມານ | 224 | 2 | 226 |
| 6 | ທາດເຫຼັກທິດລະເມັດ | 267 | 0 | 267 |
| | ລວມການບໍລິການ | 1,647 | 31 | 1,678 |

❖ ຕົວເລກໂພສະນາການ

| ລຳດັບ | ລາຍການ | ຈຳນວນບໍລິການສະສົມຜ່ານມາ | ຈຳນວນບໍລິການ ໃໝ່ | ຈຳນວນ ບໍລິການ ສະສົມທັງໝົດ |
|---|---|---|---|---|
| 1 | ກວດກັ່ນຕອງເດັກຂາດສານອາຫານ | 1527 | 154 | 1681 |
| 2 | ຂາດສານອາຫານປານກາງ | 64 | 11 | 75 |
| 3 | ຂາດສານອາຫານຮ້າຍແຮງ | 9 | 1 | 10 |
| 4 | ໄດ້ຮັບ Nutribester | 155 | 0 | 155 |
| 5 | ກວດແມ່ທີ່ລ້ຽງລູກດ້ວຍນົມ | 23 | 0 | 23 |
| 6 | ຈ່າຍຝຸ່ນວິຕາມິນເກືອແຮ່ | 488 | 0 | 488 |
| | ລວມການບໍລິການ | 2,266 | 166 | 2,432 |

❖ ຕົວເລກສັກຢາ ກັນພະຍາດ

| ລຳດັບ | ລາຍການ | ຈຳນວນບໍລິການສະສົມຜ່ານມາ | ຈຳນວນບໍລິ ການໃໝ່ | ຈຳນວນບໍລິການສະສົມທັງໝົດ |
|---|---|---|---|---|
| 1 | BCG | 55 | 0 | 55 |
| 2 | HepBo | 14 | 0 | 14 |
| 3 | OPV1 | 42 | 0 | 42 |

| | | | | |
|---|---|---|---|---|
| 4 | OPV2 | 30 | 0 | 30 |
| 5 | OPV3 | 29 | 0 | 29 |
| 6 | penta1 | 36 | 0 | 36 |
| 7 | penta2 | 22 | 0 | 22 |
| 8 | penta3 | 26 | 0 | 26 |
| 9 | ສັກຢາ MR1 | 25 | 0 | 25 |
| 10 | OPV ເດັກເກີດໃໝ່ | 11 | 0 | 11 |
| 11 | ສັກຢາ Penta 1-7 ປີ | 699 | 0 | 699 |
| 12 | OPV | 519 | 0 | 519 |
| 13 | ສັກຢາ MR1 | 370 | 0 | 370 |
| 14 | ສັກຢາ MR2 | 200 | 0 | 200 |
| 15 | ຈ່າຍຢາວິຕາມິນອາ | 264 | 0 | 264 |
| 16 | ຢາຂ້າແມ່ທ້ອງ | 114 | 0 | 114 |
| 17 | TD ແມ່ຍິງ 6-14 ຈໍານວນ | 243 | 0 | 243 |
| 18 | TD ແມ່ຍິງ 15-45 ຈໍານວນ | 2,182 | 0 | 2,182 |
| 19 | ສັກຢາ TD ແມ່ມານ | 258 | 4 | 262 |
| 20 | ສັກຢາກັນພະຍາດໄຂ້ຫວັດລະດູການ | 3,549 | 5 | 3,554 |
| 21 | ສັກຢາກັນພະຍາດໄຂ້ຫວັດຜູ້ສູງອາຍຸ | 548 | 0 | 548 |
| 22 | ສັກຢາກັນພະຍາດໄຂ້ຫວັດແມ່ມານ | 193 | 6 | 199 |
| 23 | ສັກຢາ JE | 15 | 0 | 15 |
| 23 | ຢອດຢາ Cholera 1-5 ປີ | 1,035 | 1 | 1,036 |
| 23 | ຢອດຢາ Cholera 5-15 ປີ | 2,178 | 3 | 2,181 |
| 23 | ຢອດຢາ Cholera 15 ປີ ຂຶ້ນໄປ | 3,393 | 8 | 3,401 |
| | ລວມການບໍລິການ | 16,050 | 27 | 16,077 |

❖ **ວຽກງານປິ່ນປົວ ແລະ ຟື້ນຟູໜ້າທີ່ການ**

➢ **ການບໍລິການກວດ, ປິ່ນປົວສຸຂະພາບຢູ່ແຕ່ລະຈຸດບໍລິການ ໃນວັນທີ 11 ກັນຍາ 2018**

| ລໍາດັບ | ຊື່ພະຍາດ | ຈໍານວນບໍລິການສະສົມຜ່ານມາ | | ຈໍານວນບໍລິການໃໝ່ | | ຈໍານວນບໍລິການສະສົມໃໝ່ | |
|---|---|---|---|---|---|---|---|
| | | ລວມ ສະສົມຜ່ານມາ | ແຍກເດັກລຸ່ມ 5ປີ | ລວມ ບໍລິການໃໝ່ | ແຍກເດັກລຸ່ມ 5ປີ | ລວມ ສະສົມໃໝ່ | ແຍກເດັກລຸ່ມ 5ປີ |
| 1 | ຖອກທ້ອງ | 334 | 53 | 2 | 2 | 336 | 55 |
| 2 | ຖອກທ້ອງມູກເລືອດ | 95 | 12 | 0 | 0 | 95 | 12 |
| 3 | ໄຂ້ຫວັດ | 1907 | 519 | 43 | 14 | 1950 | 533 |
| 4 | ລະບົບປະສາດ | 760 | 32 | 3 | 0 | 763 | 32 |
| 5 | ບາດແຜອະໄວຍະວະເພດ | 10 | 5 | 0 | 0 | 10 | 5 |

| | | | | | | | |
|---|---|---|---|---|---|---|---|
| 6 | ລະບົບຖ່າຍເທ | 53 | 2 | 0 | 0 | 53 | 2 |
| 7 | ພະຍາດຜິວໜັງ | 354 | 50 | 10 | 1 | 364 | 51 |
| 8 | ອະບິດານຄຳແດງ | 1313 | 355 | 41 | 17 | 1354 | 372 |
| 9 | ອັກເສບກ້າມຊີ້ນ | 236 | 8 | 2 | 0 | 238 | 8 |
| 10 | ຄວາມດັນເລືອດສູງ | 59 | 0 | 1 | 0 | 60 | 0 |
| 11 | ໄຂ້ແມງແດງ | 99 | 7 | 0 | 0 | 99 | 7 |
| 12 | ໂລກຈິດ | 5 | 1 | 0 | 0 | 5 | 1 |
| 13 | ລະບົບລະລາຍ | 918 | 63 | 12 | 0 | 930 | 63 |
| 14 | ອັກເສບປອດ | 356 | 90 | 8 | 4 | 364 | 94 |
| 15 | ກະທົບບາດແຜ | 95 | 11 | 2 | 0 | 97 | 11 |
| 16 | ພະຍາດກ່ຽວກັບຕາ | 56 | 3 | 2 | 0 | 58 | 3 |
| 17 | ອັກເສບລະບົບຫາຍໃຈ | 70 | 9 | 0 | 0 | 70 | 9 |
| 18 | ຜ່າຕັດນ້ອຍ | 109 | 7 | 2 | 0 | 111 | 7 |
| 19 | ແຂ້ວ | 47 | 8 | 0 | 0 | 47 | 8 |
| 20 | ແມ່ກາຝາກ | 72 | 18 | 1 | 0 | 73 | 18 |
| 21 | ຫູ ຕາ ດັງ ຄໍ | 92 | 23 | 0 | 0 | 92 | 23 |
| 22 | ໄຂ້ຍຸງລາຍ | 14 | 0 | 0 | 0 | 14 | 0 |
| 23 | ໄຂ້ຍຸງມາລາເລຍ | 10 | 1 | 0 | 0 | 10 | 1 |
| 24 | ພະຍາດຊຶມເຊື້ອຕ່າງໆ | 1 | 0 | 0 | 0 | 1 | 0 |
| 25 | ປະສູດ,ພະຍາດຍິງ | 121 | 0 | 1 | 0 | 122 | 0 |
| 26 | ອື່ນໆບໍ່ຮູ້ສາຍເຫດ | 662 | 36 | 11 | 2 | 673 | 38 |
| | ລວມ | 7,848 | 1,313 | 141 | 40 | 7,989 | 1,353 |

- **ລວມຄົນເຈັບໄພພິບັດແຕ່ວັນທີ່ 24 ກໍລະກົດ ຫາ 11 ກັນຍາ 2018**

| ລຳດັບ | ລາຍການ | ຈຳນວນບໍລິການສະສົມຜ່ານມາ | ຈຳນວນບໍລິການໃໝ່ | ຈຳນວນບໍລິການສະສົມທັງໝົດ |
|---|---|---|---|---|
| 1 | ຄົນເຈັບກວດເຂດນອກທັງໝົດ | 12,268 | 141 | 12,409 |
| 2 | ຄົນເຈັບກວດເຂດນອກໃນ13ບ້ານ | 5,648 | 58 | 5,706 |
| 3 | ຄົນເຈັບກວດເຂດນອກໃນ6ບ້ານ | 2,496 | 33 | 2,529 |
| 4 | ຄົນເຈັບນອນໂຮງໝໍໃນ13ບ້ານ | 334 | 5 | 339 |
| 5 | ຄົນເຈັບນອນໂຮງໝໍໃນ6ບ້ານ | 291 | 5 | 296 |
| 6 | ຄົນເຈັບມີໜ້າໃນໂຮງໝໍ | 739 | 32 | 771 |
| 7 | ຄົນເຈັບສົ່ງແຂວງ | 126 | - | 126 |

❖ ສົ່ງໂຮງໝໍແຂວງມີ 0 ກໍລະນີ

❖ ວຽກງານສຸຂະພາບຈິດ

| ລຳດັບ | ລາຍການພະຍາດລະບົບຈິດ | ສະສົມຮອດປະຈຸບັນ |
|---|---|---|
| 1 | ຈຳນວນຄົນທີ່ມີອາການໂສກເສົ້າຮຸນແຮງໃໝ່ | 0 |
| 2 | ຈຳນວນຄົນທີ່ມີອາການໂສກເສົ້າຮຸນແຮງສະສົມ | 11 |
| 3 | ຈຳນວນຄົນທີ່ມີອາການໂສກເສົ້າຮຸນແຮງທີ່ໄດ້ຖືກຕິດຕາມ | 0 |
| 4 | ຈຳນວນຄົນທີ່ມີອາການໂສກເສົ້າຮຸນແຮງ ອາການດີຂຶ້ນ | 0 |
| 5 | ຈຳນວນຄົນຖືກບົ່ງມະຕິພະຍາດສຸຂະພາບຈິດໃໝ່ | 4 |
| 6 | ຈຳນວນຄົນຖືກບົ່ງມະຕິພະຍາດສຸຂະພາບຈິດ ສະສົມ | 221 |
| 7 | ຈຳນວນຄົນຖືກບົ່ງມະຕິພະຍາດສຸຂະພາບຈິດໄດ້ຖືກຕິດຕາມ | 1 |
| 8 | ຈຳນວນຄົນຖືກບົ່ງມະຕິພະຍາດສຸຂະພາບຈິດ ອາການດີຂຶ້ນ | 1 |
| 9 | ຈຳນວນຄົນທີ່ມີຕ້ອງຕິດຕາມການດູແລ ປິ່ນປົວ | 53 |

❖ ວຽກງານຄວບຄຸມພະຍາດຕິດຕໍ່

- ທີມງານລົງເກັບກຳຂໍ້ມູນ ໃນ 1 ຈຸດບໍລິການ ຄື: 1. ໂຮງໝໍເມືອງ, ໂຮງຮຽນປະຖົມ, ໂຮງຮຽນອະນຸບານ ແລະ ຫ້ອງການບ້ານມິດສຳພັນ (ສຳລັບໂຮງຮຽນອະນຸບານ,ໂຮງຮຽນປະຖົມ ແລະ ຫ້ອງການບ້ານມິດສຳພັນ ບໍ່ມີແພດປະຈຳການແລ້ວ ເພາະວ່າເປັນເຂດເທດສະບານເມືອງ ແລະ ໃຫ້ຄົນເຈັບມາບໍລິການຢູ່ໂຮງໝໍເມືອງ ແຕ່ທີມງານ RRT ກໍ່ໄດ້ລົງໄປເກັບກຳຂໍ້ມູນນຳນາຍບ້ານ ຫລື ຫົວໜ້າຫ້ອງ)
- ໄດ້ຮັບລາຍງານປະຈຳວັນ ຈາກຈຸດອົບພະຍົບບ້ານບົກ, ບ້ານບິນດົງ ແລະ ບ້ານຕະມໍຢອດ ໂດຍແມ່ນທີມງານແພດປະຈຳສະໜາມເປັນຜູ້ລາຍງານໃນແຕ່ລະຈຸດ.
- ໄດ້ວິເຄາະຂໍ້ມູນ ຕາມບຸກຄົນ, ເວລາ ແລະ ສະຖານທີ່ ສຳລັບ 15 ພະຍາດເຝົ້າລະວັງ ທີ່ໄດ້ຈາກແຕ່ລະຈຸດເຝົ້າລະວັງ ແລະ ໄດ້ອອກແບບວິທີການນຳສະເໜີຂໍ້ມູນ.
- ທີມງານສູນໄຂ້ຍຸງ,ຂະແໜງຄວບຄຸມພະຍາດຕິດຕໍ່ຂັ້ນແຂວງ ແລະ ຂັ້ນເມືອງ ລົງພົ່ນຢາຄວບຄຸມຍຸງ ຢູ່ຈຸດບ້ານບົກ ໄດ້ 103 ເຕົ້າ ,ລວມມີ 103ຄອບຄົວ, ມີ 427ຄົນ ປົກຄຸມໄດ້ 100% .
- ທີມງານສູນໄຂ້ຍຸງ 03ຄົນ,ຂະແໜງຄວບຄຸມພະຍາດຕິດຕໍ່ຂັ້ນແຂວງ 07ຄົນ,ສຸຂະສຶກສາຂັ້ນແຂວງ 03ຄົນ, ພະນັກງານຂັ້ນເມືອງ 04ຄົນ ແລະ ອາສາລະໝັກບ້ານ 02ຄົນ ລວມ 19 ຄົນ ໄດ້ລົງສຳຫຼວດ ແລະ ທຳລາຍແຫ່ງເພາະພັນຍຸງລາຍແບບໜ້າກະດານ ຢູ່ບ້ານມິດສຳພັນ ສຳຫຼວດໄດ້ 141 ຫຼັງຄາເຮືອນ ,ປະຊາຊົນ 734 ຄົນ, ພົບມີໜອນນ້ຳ 24ຫຼັງຄາເຮືອນ,ສຳຫຼວດພະສະນະ 359 ພະສະນະ ພົບມີໜອນນ້ຳຈຳນວນ 61 ພະສະນະ (HI= 17,02%,CI=16,99 %,BI= 43,26).
- ລົງສອບສວນ ແລະ ເກັບຕົວຢ່າງ 03ກໍລະນີ ຄົນເຈັບທີ່ເປັນໄຂ້ເລືອດອອກຢູ່ໂຮງໝໍເມືອງສະໜາມໄຊ ເພື່ອສົ່ງສູນລະບາດ ແລະວິເຄາະວິທະຍາ ( ລາຍລະອຽດຈະລາຍງານໃສ່ EBS ມື້ອື່ນ).

➢ ປະເມີນຄວາມສ່ຽງການເກີດລະບາດປະຈຳວັນໃນແຕ່ລະຈຸດລວມທັງໂຮງໝໍເມືອງມີດັ່ງນີ້:

1. ອາການຄ້າຍຄືໄຂ້ຫວັດ 33 ກໍລະນີ
2. ຊືມເຊື້ອລະບົບຫາຍໃຈຮຸນແຮງ 07 ກໍລະນີ
3. ໄຂ້ຍຸງລາຍ 15 ກໍລະນີ
4. ພະຍາດຜິວໜັງ 06 ກໍລະນີ
5. ໄຂ້ບໍ່ຮູ້ສາຍເຫດ 01 ກໍລະນີ
6. ຖອກທ້ອງເປັນນໍ້າກະທັນຫັນ 08 ກໍລະນີ
7. ໄຂ້ແມງແດງ 05 ກໍລະນີ

❖ <u>ແປຜົນຂໍ້ມູນ:</u>

ອີງຕາມການສະຫຼຸບຕົວເລກຕັ້ງແຕ່ວັນທີ 24/07/2018 ເປັນຕົ້ນມາ ລາຍລະອຽດຕ່າງໆມີດັ່ງລຸ່ມນີ້:

- ພົບວ່າພະຍາດອາການຄ້າຍຄືໄຂ້ຫັວດ ມີກໍລະນີທັງໝົດ 2,026 ກໍລະນີ ຊຶ່ງມີທ່າອ່ຽງເທົ່າເດີມ ຈາກຕົວເລກລາຍງານ ແຕ່ວ່າຈຸດທີ່ມີຕົວເລກລາຍງານມື້ວານນີ້ ແຕ່ຕ້ອງຍັງຕ້ອງໃຫ້ສຸຂະສຶກສາແນະນຳຄົນເຈັບປະຕິບັດຫຼັກການອະນາໄມ, ມີມາລະຍາດໄອຈາມ ແລະ ມີອາການຮ້າຍແຮງ ໃຫ້ໄປກວດຕື່ມຢູ່ໂຮງໝໍເມືອງ.
- ພະຍາດຖອກທ້ອງ ມີທັງໝົດ 463 ກໍລະນີ ເຊິ່ງເຫັນວ່າມີທ່າອ່ຽງເພີ່ມຂຶ້ນ ທຽບຕົວເລກວັນທີ 10/09/2018 ແລະ ຜ່ານມາ ແມ່ນໄດ້ເກັບຕົວ່າງອາຈົມທັງໝົດ 10 ກໍລະນີ ແມ່ນບໍ່ພົບເຊື້ອທີ່ກໍ່ໃຫ້ເກີດພະຍາດຖອກທ້ອງ, ແຕ່ວ່າ ຕ້ອງໄດ້ເອົາໃຈໃສ່ຕິດຕາມເຝົ້າລະວັງ ແລະ ໃຫ້ສຸຂະສຶກສາກ່ຽວກັບວຽກງານ 3 ສະອາດ.
- ພະຍາດໄຂ້ແມງແດງ ມີທັງໝົດ 170 ກໍລະນີ ຈາກການສັງເກດເຫັນວ່າຈຳນວນກໍລະນີເພີ່ມຂຶ້ນ ທຽບໃສ່ຕົວເລກວັນທີ 10/09/2018 ແລະ ຜ່ານມາ ໄດ້ເກັບຕົວຢ່າງເລືອດ ຈຳນວນ 05 ກໍລະນີ ແຕ່ບໍ່ພົບເຊື້ອ ຊຶ່ງຄົນເຈັບມານອນປິ່ນປົວຢູ່ໂຮງໝໍເມືອງ
- ພະຍາດໄຂ້ຍຸງລາຍ ມີທັງໝົດ 84 ກໍລະນີ ຊຶ່ງສົມທຽບໃສ່ຕົວເລກມື້ວານມີທ່າອ່ຽງເພີ່ມຂຶ້ນ ໄດ້ລົງສອບສວນແລະເກັບຕົວຢ່າງຢູ່ໂຮງໝໍເມືອງ ,ໄດ້ລົງສຳຫຼວດ ແລະ ທຳລາຍແຫ່ງເພາະພັນຍຸງລາຍແບບໜ້າກະດານ ຢູ່ບ້ານມິດສຳພັນແລະ ຕ້ອງໄດ້ເອົາໃຈໃສ່ຕິດຕາມ, ເຝົ້າລະວັງ ແລະລາຍງານຢ່າງໃກ້ສິດ.
- ເບື່ອອາຫານ ມີທັງໝົດ 14 ກໍລະນີ ຈາກການສັງເກດການເຫັນວ່າຈຳນວນມີທ່າອ່ຽງຫຼຸດລົງ ທຽບໃສຕົວເລກວັນທີ 8/9/2018, ຕ້ອງໄດ້ໃຫ້ສຸຂະສຶກສາກ່ຽວກັບວຽກງານ 3 ສະອາດ.

❖ **ມາດຕະການໃນການຄວບຄຸມພະຍາດວັນນະໂລກ**

| ລຳດັບ | ລາຍການ | ຈຳນວນບໍລິການສະສົມຜ່ານມາ | ຈຳນວນບໍລິການໃໝ່ | ຈຳນວນບໍລິການສະສົມທັງໝົດ |
|---|---|---|---|---|
| 1 | ເປົ້າໝາຍເຂົ້າຮ່ວມ | 1207 | 11 | 1218 |
| 2 | ກໍລະນີສົງໃສ | 173 | 4 | 177 |
| 3 | ຂຶ້ນທະບຽນປິ່ນປົວ | 52 | 2 | 54 |
| | ລວມການບໍລິການ | **1,432** | **17** | **1,449** |

❖ **ວຽກງານອາຫານປອດໄພ ແລະ ຢາ.**

- ຈ່າຍຢາໃຫ້ສະຖານທີ່ບໍລິການ ຈຸດ ບ້ານປີ່ນດົງ ຈຳນວນ 18 ລາຍການ.
- ຈ່າຍຢາໃຫ້ສະຖານທີ່ບໍລິການ ໂຮງໝໍເມືອງ ຈຳນວນ 2 ລາຍການ.
- ຈ່າຍຢາໃຫ້ສຸກສາລາໄຊດອນໂຂງ ຈຳນວນ 4 ລາຍການ.
- ຈັດມ້ຽນຢາໃນສາງ.

❖ **ພາລາທິການພາກສະໜາມ:**

- ໄດ້ຈັດສົ່ງອາຫານ ແລະ ນ້ຳດື່ມໃຫ້ຈຸດບໍລິການບ້ານປີ່ນດົງ.
- ໄດ້ຈັດສົ່ງຢາໃຫ້ຈຸດບໍລິການບ້ານປີ່ນດົງ 23 ລາຍການ.
- ໄດ້ສົ່ງແບບຟອມການລາຍງານການລະບາດ, ແບບຟອມກອດຄົນເຈັບເຂດນອກ ໃຫ້ຈຸດບໍລິການບ້ານປີ່ນດົງ.

❖ **ການຮັບການຊ່ວຍເຫຼືອພາກສະໜາມ:**

- ຄວາມຄືບໜ້າໃນການກໍ່ສ້າງໂຮງໝໍເມືອງສະໜາມໄຊ, ປະຈຸບັນນີ້ໄດ້ 13% ອີງຕາມການລາຍງານຂອງວິຊາການ ຍທຂເມືອງ.
- ໄດ້ຮັບນ້ຳມັນລິດ ຈາກຄະນະກຳມະການຟື້ນຟູ ແລະ ແກ້ໄຂຜົນກະທົບໄພນ້ຳຖ້ວມຢູ່ເມືອງສະໜາມໄຊ ຈຳນວນ 16 ລິດ.

## IV. ບໍລິຫານ, ການເງິນ ແລະ ພາລາທິການ

❖ **ພາລາທິການ**

❖ **ຮັບການຊ່ວຍເຫຼືອຂັ້ນແຂວງ**

## V. ຂໍ້ຫຍຸ້ງຍາກ

- ການລາຍງານຕົວເລກຂອງຈຸດບໍລິການອົບພະຍົບ ບ້ານດອນບົກ, ປີ່ນດົງ ແລະ ຕໍມະຢອດ ຍັງມີຄວາມຫຍຸ້ງໃນການເກັບກຳຂໍ້ມູນເນື່ອງຈາກສັນຍານໂທລະສັບບໍ່ໄດ້ດີໃນບາງຄັ້ງ.
- ບໍ່ມີຕົວເລກລາຍງານຈາກ ສູນມັດທະຍົມສະໜາມໄຊ (ບໍ່ມີແພດປີ່ນປົວປະຈຳ).

## VI. ແຜນການຈັດຕັ້ງປະຕິບັດ

1. ຈັດສົ່ງທີມງານແພດເມືອງພູວົງ ເພື່ອສັບປ່ຽນພະນັກງານ ຢູ່ຈຸດປະສານງານຂັ້ນເມືອງ 2 ທ່ານ
2. ສືບຕໍ່ລົງສອບສວນ ແລະ ເກັບຕົວຢ່າງກໍລະນີຄົນເຈັບທີ່ເປັນໄຂ້ເລືອດອອກ ຢູ່ໂຮງໝໍເມືອງສະໜາມໄຊ.
3. ສືບຕໍ່ລົງສຳຫຼວດ ແລະ ທຳລາຍແຫຼ່ງເພາະພັນຍຸງລາຍແບບໜ້າກະດານຢູ່ບ້ານມິດສຳພັນສະໜາມໄຊ ຂອງທີມງານສູນໄຂ້ຍຸງ,ຂະແໜງຄວບຄຸມພະຍາດຕິດຕໍ່ຂັ້ນແຂວງ, ຂັ້ນເມືອງ.
4. ສືບຕໍ່ລົງຈຳກັດຂີ້ເຫຍື້ອ ແລະ ຮ່ອງນ້ຳເປື້ອນ (ນ້ຳເສຍ) ຢູ່ແຕ່ລະສູນໃນເຫດສະບານ.
5. ສືບຕໍ່ຮັບລາຍງານຈາກຈຸດເຝົ້າລະວັງບ້ານບົກ, ບ້ານປີ່ນດົງ ແລະ ບ້ານຕະມໍຢອດ
6. ສືບຕໍ່ລໍຖ້າຜົນກວດ ຕົວຢ່າງເລືອດ ສຳລັບພະຍາດໄຂ້ແມງແດງ ຈຳນວນ 01 ຕົວຢ່າງ ຄົນເຈັບມາຈາກໂຮງໝໍເມືອງສະໜາມໄຊ ແລະ ຕົວຢ່າງເຍື່ອເມືອກຜົ້ງດັງ-ຮູຄໍ ຈຳນວນ 03 ຕົວຢ່າງ ສຳລັບໄຂ້ຫວັດ

7. ສືບຕໍ່ລໍຖ້າຜົນກວດ ຕົວຢ່າງເລືອດ ສໍາລັບພະຍາດໄຂ້ຍຸງລາຍ ຈໍານວນ 03 ຕົວຢ່າງ ຄືນເຈັບມາຈາກໂຮງໝໍເມືອງສະໝາມໄຊ.
8. ສືບຕໍ່ລົງໂຄສະນາສຸຂະສຶກສາບ້ານສົມປ່ອຍ ແລະ ຫາດອຸດົມໄຊ. ວຽກງານຄວບຄຸມພະຍາດໄຂ້ຍຸງລາຍ ແລະ ໄຂ້ຫວັດ.
9. ສືບຕໍ່ປະຕິບັດວຽກງານເປັນປົກກະຕິ, ອະນາໄມສາງຢາ, ຈັດມ້ຽນຢາພາຍໃນສາງ.
10. ກະກຽມລົງຕິດຕາມເດັກຂາດສານອາຫານຢູ່ຈຸດ ມສ ສະໝາມໄຊ, ຈຸດໂຮງຮຽນອະນຸບານ, ຈຸດໂຮງຮຽນປະຖົມສະໝາມໄຊ.
11. ສືບຕໍ່ລົງກວດກັ່ນຕອງຫາເດັກຂາດສານອາຫານຢູ່ຈຸດພັກເຊົາຊົ່ວຄາວບ້ານຫາດຍາວ.

## VII. ຂໍ້ສະເໜີ

❖ **ສະເໜີຫາຂັ້ນແຂວງ**

- ພິຈາລະນາຄົ້ນຄວ້າ ແລະ ມີຄໍາຕອບ ບັນດາຂໍ້ສະເໜີທີ່ຍັງບໍ່ທັນໄດ້ແກ້ໄຂ.

❖ **ສະເໜີຫາກະຊວງສາທາລະນະສຸກ**

- ພິຈາລະນາຄົ້ນຄວ້າ ແລະ ມີຄໍາຕອບ ບັນດາຂໍ້ສະເໜີທີ່ຍັງບໍ່ທັນໄດ້ແກ້ໄຂ.

## VIII. ຈຸດປະສານງານມີດັ່ງນີ້

- **ຈຸດປະສານງານຂັ້ນແຂວງ:**

ຫ້ອງປະຕິບັດງານສຸກເສີນດ້ານສາທາລະນະສຸກ ຕັ້ງຢູ່ພະແນກສາທາລະນະສຸກ,

❖ ເບີໂທ ແລະ ແຟັກ 036- 211 020

ອີເມວ: LAKHONEVONG.L@gmail.com
keo_nasl@hotmail.com

| | | |
|---|---|---|
| ຜູ້ປະສານງານ: | ດຣ ວິລະສັກ ນະວົງສາ | 020 28967244 |
| | ທ່ານ ນ. ສຸມຸນທາ ໂຮມອິນຕາ | 020 99160081 |
| | ທ່ານ ແກ້ວປະສິງ ນອນສໍາລານ | 020 22428555 |
| | ທ່ານ ນາງ ລັດດາວັນ ຫຼ້າຄອນວົງ | 020 58433356 |

- **ຈຸດປະສານງານພາກສະໜາມ:**

| | | |
|---|---|---|
| ຜູ້ປະສານງານ: | ທ່ານ ດຣ ອິນປອນ ເດດວິກອນ | 020 22705682 |
| | ທ່ານ ສີພະໄກ ດວງມາລາ | 020 96969607 |

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ຫົວໜ້າພະແນກສາທາລະນະສຸກແຂວງ**

**(ຫ້ອງປະຕິບັດງານສຸກເສີນດ້ານສາທາລະນະສຸກ)**